# CIPROFLOXACIN:
# ຢາປະຕິຊີວະນະສຳລັບຜູ້ທີ່ພົວພັນກັບຄົນທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ

Ciprofloxacin ແມ່ນຢາຕ້ານເຊື້ອຫຼືຢາປະຕິວະນະຊນິດນຶ່ງຊຶ່ງບາງຄັ້ງເປັນຢາທີ່ໃຫ້ຄົນພວກທີ່ພົວພັນໃກ້ຊິດກັບຄົນທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ. ຈຸດປະສົງໃນການໃຫ້ຢາປະຕິຊີວະນະນີ້ ກໍເພື່ອທຳການກຳຈັດແມ່ພະຍາດຂອງໂຣກເຍື່ອຫຸ້ມສມອງອັກເສບຊຶ່ງ "ຕິດຄາ" ຢູ່ໃນຮູຄໍຂອງຜູ້ພົວພັນ ເພື່ອວ່າເຂົາເຈົ້າຈະ ບໍ່ໄດ້ນຳເຊື້ອໄປແຜ່ພາຍໃຫ້ຄົນອື່ນຕື່ມອີກ.

ຢາປະຕິຊີວະນະນີ້ ບໍ່ສາມາດປິ່ນປົວຄົນທີ່ເປັນໂຣກນີ້ຢູ່ແລ້ວ, ສະນັ້ນ ທ່ານຍັງຕ້ອງສັງເກດເບິ່ງອາການ ແລະສິ່ງທີ່ສໍ່ສະແດງຕ່າງໆຂອງໂຣກເຍື່ອຫຸ້ມສມອງອັກເສບນີ້ຢູ່.

## ຄຳແນະນຳໃນການໃຊ້ຢາ **ciprofloxacin**

- ຢາ ciprofloxacin ແມ່ນຢາເມັດ 500 mg ແລະ ກິນເທື່ອດຽວ.
- ຢາເມັດນີ້ຕ້ອງກືນກິນໝົດເມັດແລະກິນລ່ອງລົງຄໍກັບນ້ຳເຕັມຈອກນຶ່ງ.
- ຢ່າກິນຢານີ້ຖ້າທ່ານໄດ້ກິນຢາ ລົດກົດ/ຊ່ວຍຍ່ອຍອາຫານ ຫຼື ຢາທີ່ປະກອບດ້ວຍທາດເຫຼັກ ຫຼື ຢາເສີມແຮ່ທາດຕ່າງໆ ພາຍໃນເວລາ 4 ຊົ່ວໂມງທີ່ຜ່ານມາ.

## ທ່ານຕ້ອງ <u>ບໍ່</u> ກິນຢາ **ciprofloxacin** ຖ້າຫາກວ່າທ່ານ:

- ເຄີຍມີປະຕິກິຣິຍາແພ້ຢາ ciprofloxacin ນີ້ມາກ່ອນ;
- ກຳລັງຖືພາຢູ່ຫຼືໃຫ້ລູກກິນນົມຢູ່;
- ເປັນເດັກນ້ອຍອາຍຸຕ່ຳກວ່າ 12 ປີ.

ຖ້າວ່າຢາ ciprofloxacin ບໍ່ເໝາະສົມກັບທ່ານ, ທ່ານຈະຕ້ອງໄດ້ກິນຢາປະຕິຊີວະນະຊນິດອື່ນເພື່ອກຳຈັດແມ່ພະຍາດຈາກໂຣກເຍື່ອຫຸ້ມສມອງອັກເສບ.

## ຜົນຂ້າງຄຽງຈາກຢາ **ciprofloxacin**

- ທ່ານອາດເກີດອາການເມື່ອຍອ່ອນເພັຍຫຼືເຈັບໃນທ້ອງ ແຕ່ວ່າ ອາການເຫຼົ່ານີ້ ຕາມປົກກະຕິແລ້ວ ຈະຫາຍໄປໂດຍໄວແລະບໍ່ຄວນກັງວົນ.
- ຜົນຂ້າງຄຽງທີ່<u>**ມັກເປັນຫຼາຍ**</u>ແມ່ນມີປະຕິກິຣິຍາເກີດອາການແພ້ ໂດຍໃບໜ້າໃຄ່ຂຶ້ນ. ອາການດັ່ງກ່າວ ອາດເກີດຂຶ້ນ ບໍ່ດົນຫຼັງຈາກກິນຢາແລ້ວ; ຖ້າເປັນດັ່ງນີ້, ໃຫ້ຮີບຫາໝໍ <u>**ໃນທັນທີ**</u> (ໃຫ້ຫາໝໍຖ້າທ່ານຢູ່ໃນໂຮງໝໍ ຫຼື ໃຫ້ໂທຣະສັບເລກ 000).

## ປະຕິກິຣິຍາທີ່ອາດບັງເກີດກັບຢາຊະນິດອື່ນໆ

ຖ້າທ່ານກຳລັງກິນຢາຊະນິດອື່ນຢູ່ ທ່ານຕ້ອງຖາມທ່ານໝໍຂອງທ່ານກ່ອນຈະກິນຢາ ciprofloxacin. ການກິນຢາ ciprofloxacin ກໍຖືວ່າປອດພັຍດີ ຖ້າທ່ານກິນຢາຄຸມກຳເນີດຢູ່.

## ຣາຍລະອຽດເພີ້ມເຕີມ - ພະແນກສາທາຣະນະສຸກແຫ່ງຣັດ NSW

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ພະແນກສາທາຣະນະສຸກທ້ອງຖິ່ນ ຫຼື ສູນອະນາໄມຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ຣັຖບານປະຈຳຣັດ *NSW Government* ທາງໜ້າຂອງສມຸດ ໂທຣະສັບ (White Pages).

| ເຂດໃນຕົວເມືອງ | ສະຖານທີ່ | ເລກໂທຣະສັບ | ເຂດຊົນນະບົດ | ສະຖານທີ່ | ເລກໂທຣະສັບ |
|---|---|---|---|---|---|
| **Northern Sydney/Central Coast** | Hornsby | 02 9477 9400 | **Greater Southern** | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6080 8900 |
| **South Eastern Sydney/Illawarra** | Randwick | 02 9382 8333 | **Greater Western** | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| **Sydney South West** | Camperdown | 02 9515 9420 | | Bathurst | 02 6339 5601 |
| **Sydney West** | Penrith | 02 4734 2022 | **Hunter/New England** | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| **Justice Health Service** | Matraville | 02 9311 2707 | **North Coast** | Port Macquarie | 02 6588 2750 |
| **NSW Department of Health** | Nth Sydney | 02 9391 9000 | | Lismore | 02 6620 7500 |
| **NSW Health: www.health.nsw.gov.au** | | | | | |

**RIFAMPICIN:**

# ຢາປະຕິຊີວະນະສຳລັບຜູ້ທີ່ພົວພັນກັບຄົນທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ

Rifampicin ແມ່ນຢາຕ້ານເຊື້ອຫຼືຢາປະຕິວະນະຊນິດນຶ່ງຊຶ່ງບາງຄັ້ງເປັນຢາທີ່ໃຫ້ຄົນພວກທີ່ພົວພັນໃກ້ຊິດກັບຄົນທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ. ຈຸດປະສົງໃນການໃຫ້ຢາປະຕິຊີວະນະນີ້ ກໍເພື່ອທຳການກຳຈັດແມ່ພະຍາດຂອງໂຣກເຍື່ອຫຸ້ມສມອງອັກເສບຊຶ່ງ "ຕິດ" ຢູ່ໃນຮູຄໍຂອງຜູ້ພົວພັນ ເພື່ອວ່າເຂົາເຈົ້າຈະ ບໍ່ໄດ້ນຳເຊື້ອໄປແຜ່ຜາຍໃຫ້ຄົນອື່ນຕື່ມອີກ.

ຢາປະຕິຊີວະນະນີ້ ບໍ່ສາມາດປິ່ນປົວຄົນທີ່ເປັນໂຣກນີ້ຢູ່ແລ້ວ, ສະນັ້ນ ທ່ານຍັງຕ້ອງສັງເກດເບິ່ງອາການ ແລະສິ່ງທີ່ສໍ່ສະແດງຕ່າງໆຂອງໂຣກເຍື່ອຫຸ້ມສມອງອັກເສບນີ້ຢູ່.

## ຄຳແນະນຳໃນການໃຊ້ຢາ Rifampicin

- ຢາ Rifampicin ແມ່ນກິນສອງເທື່ອຕໍ່ມື້ ເປັນເວລາສອງມື້ (ຕ້ອງກິນທັງໝົດສີ່ເທື່ອ). ຢານີ້ມາໃນຮູບແບບເປັນຢາເມັດ, ແຄບຊູນ ຫຼື ຢານ້ຳ.
- ຢາ Rifampicin ຕ້ອງກິນຕອນທ້ອງເປົ່າ, ອາດຈະແມ່ນເຄິ່ງຊົ່ວໂມງກ່ອນກິນອາຫານ ຫຼືສອງຊົ່ວໂມງຫຼັງອາຫານ.

## ທ່ານຕ້ອງ <u>ບໍ່</u> ກິນຢາ Rifampicin ຖ້າຫາກວ່າທ່ານ:

- ເຄີຍແພ້ຢາ Rifampicin
- ມີຕັບທີ່ຖືກທຳລາຍເສັຍຫາຍຢ່າງແຮງ (ຮວມທັງການເປັນໂຣກຂີ້ໝາກເຫຼືອງດ້ວຍ);
- ເປັນຄົນຕິດເຫຼົ້າ; ຫຼື
- ກຳລັງຖືພາຢູ່.

ຖ້າວ່າຢາ Rifampicin ບໍ່ເໝາະສົມກັບທ່ານ, ທ່ານຈະຕ້ອງໄດ້ກິນຢາປະຕິຊີວະນະຊນິດອື່ນເພື່ອກຳຈັດແມ່ພະຍາດຈາກໂຣກເຍື່ອຫຸ້ມສມອງອັກເສບ.

## ຜົນຂ້າງຄຽງຈາກຢາ Rifampicin

- ຄົນບາງຄົນອາດຮູ້ສຶກ 'ບໍ່ສະບາຍ' ຫຼັງຈາກກິນຢາ rifampicin: ອາການຕ່າງໆ ເຊັ່ນ ປັ່ນປ່ວນໃນທ້ອງ, ເຈັບຫົວ ແລະ ວິນຫົວ ອາດເກີດຂຶ້ນໄດ້.
- ຢາ Rifampicin ອາດເຮັດໃຫ້ປັດສະວະແລະນ້ຳຕາກາຍເປັນສີ ຊົມພູອົມສົ້ມ. ອາການດັ່ງກ່າວນີ້ບໍ່ມີອັນຕຣາຍ ແລະ ຈະຫາຍໄປເມື່ອຢຸດກິນຢາ.
- ຢາ Rifampicin ອາດເຮັດໃຫ້ ແກ້ວຄອນແທັກເລັນຊ໌ຊນິດອ່ອນ ທີ່ໃສ່ຕາ ເປື້ອນສີແບບຖາວອນ ສະນັ້ນຈຶ່ງຄວນຫຼີກເວັ້ນບໍ່ໃສ່ ຄອນແທັກເລັນຊ໌ ໃນຊ່ວງລະຍະໃຊ້ຢານີ້.

## ປະຕິກິລິຍາທີ່ອາດບັງເກີດກັບຢາຊນິດອື່ນໆ

ຖ້າທ່ານກິນຢາແພດສັ່ງຊນິດຕ່າງໆດັ່ງນີ້: anticoagulants ເຊັ່ນຢາ warfarin, steroids, ຢາຫຼາຍໆຊນິດສຳລັບໂຣກຫົວໃຈ, ຢາເມັດກິນຄວບຄຸມໂຣກ ເບົາຫວານ, ຢາເມັດສຳລັບໂຣກລົມຊັກ, ຢາເມັດສຳລັບໂຣກຫືດ, ຢາ ເມທາດອນ, ຢາປະເພດຕ້ານເຊື້ອ ໄວຣັສ, ຢາລະງັບປະສາດ ແລະ cyclosporin — **ໃຫ້ແຈ້ງ**ໃຫ້ທ່ານໝໍຂອງທ່ານຊາບວ່າທ່ານຈະໄດ້ກິນຢາ rifampicin ເພື່ອວ່າທ່ານໝໍອາດຈະຕ້ອງໄດ້ປັບ ລະດັບແລະຈຳນວນ ຢາອື່ນໆຂອງທ່ານໃຫ້ເໝາະສົມ.

Rifampicin ສາມາດຫຼຸດຜ່ອນປະສິດທິພາບຂອງຢາກິນຄຸມກຳເນີດໄດ້. ແມ່ຍິງທີ່ກິນຢາເມັດຄຸມກຳເນີດ ກໍຄວນກິນຕໍ່ໄປ, ໂດຍຂ້າມຊ່ວງທີ່ບໍ່ມີຕົວຢາຫຼືເມັດທີ່ເຮັດດ້ວຍນ້ຳຕານ, ໃນລະຫວ່າງທີ່ກິນຢາ rifampicin ແລະ ສຳລັບເຈັດມື້ຫຼັງຈາກກິນຢາ rifampicin ເທື່ອສຸດທ້າຍ. **ນອກນີ້** ເຂົາເຈົ້າຍັງຄວນໃຊ້ການຄຸມກຳເນີດຊນິດອື່ນຄວບຄູ່ກັນໄປ, ເຊັ່ນຖົງອະນາມັຍ, ໃນຂນະທີ່ກິນຢາ rifampicin ແລະ ສີ່ອາທິດຫຼັງຈາກກິນຢາ rifampicin ເທື່ອສຸດທ້າຍ.

## ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ພແນກສາທາຣະນະສຸກທ້ອງຖິ່ນ ຫຼື ສູນອະນາໄມຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ຣັຖບານປະຈຳຣັດ *NSW Government* ທາງໜ້າຂອງສມຸດ ໂທຣະສັບ (White Pages).

| ເຂດໃນຕົວເມືອງ | ສະຖານທີ່ | ເລກໂທຣະສັບ | ເຂດຊົນນະບົດ | ສະຖານທີ່ | ເລກໂທຣະສັບ |
|---|---|---|---|---|---|
| **Northern Sydney/Central Coast** | Hornsby | 02 9477 9400 | **Greater Southern** | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6080 8900 |
| **South Eastern Sydney/Illawarra** | Randwick | 02 9382 8333 | **Greater Western** | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| **Sydney South West** | Camperdown | 02 9515 9420 | | Bathurst | 02 6339 5601 |
| **Sydney West** | Penrith | 02 4734 2022 | **Hunter/New England** | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| **Justice Health Service** | Matraville | 02 9311 2707 | **North Coast** | Port Macquarie | 02 6588 2750 |
| **NSW Department of Health** | Nth Sydney | 02 9391 9000 | | Lismore | 02 6620 7500 |
| **NSW Health: [www.health.nsw.gov.au](http://www.health.nsw.gov.au)** | | | | | |

# CEFTRIAXONE:
# ຢາປະຕິຊີວະນະສຳລັບຜູ້ທີ່ພົວພັນກັບຄົນທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ

Ceftriaxone ແມ່ນຢາຕ້ານເຊື້ອຫຼືຢາປະຕິວະນະຊນິດນຶ່ງຊຶ່ງບາງຄັ້ງເປັນຢາທີ່ໃຫ້ຄົນພວກທີ່ພົວພັນໃກ້ຊິດກັບຄົນທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ. ຈຸດປະສົງໃນການໃຫ້ຢາປະຕິຊີວະນະນີ້ ກໍເພື່ອທຳການກຳຈັດແມ່ພະຍາດຂອງໂຣກເຍື່ອຫຸ້ມສມອງອັກເສບຊຶ່ງ "ຕິດ" ຢູ່ໃນຮູຄໍຂອງຜູ້ພົວພັນ ເພື່ອວ່າເຂົາເຈົ້າຈະ ບໍ່ໄດ້ນຳເຊື້ອໄປແຜ່ຜາຍໃຫ້ຄົນອື່ນຕື່ມອີກ.

ຢາປະຕິຊີວະນະນີ້ ບໍ່ສາມາດປິ່ນປົວຄົນທີ່ເປັນໂຣກນີ້ຢູ່ແລ້ວ, ສະນັ້ນ ທ່ານຍັງຕ້ອງສັງເກດເບິ່ງອາການ ແລະສິ່ງທີ່ສໍ່ສະແດງຕ່າງໆຂອງໂຣກເຍື່ອຫຸ້ມສມອງອັກເສບນີ້ຢູ່.

Ceftriaxone ແມ່ນສັກໃຫ້ແບບເຂັມດຽວ ເຂົ້າໃສ່ກ້າມຊີ້ນເຊັ່ນຂາຫຼືກະໂພກ. Ceftriaxone ແມ່ນຢາທີ່ປອດພັຍສຳລັບແມ່ຍິງຖືພາແລະແມ່ທີ່ໃຫ້ລູກກິນນົມຕົນເອງ.

ທ່ານຕ້ອງບໍ່ກິນຢາ ceftriaxone ຖ້າທ່ານ:

- ແພ້ຢາ ceftriaxone ຫຼື ຢາປະຕິຊີວະນະ cephalosporin ແບບອື່ນໆຫຼື
- ເຄີຍມີອາການແພ້ຢ່າງປັດຈຸບັນທັນດ່ວນແລະຮ້າຍແຮງຕໍ່ຢາປະຕິຊີວະນະເປນີຊີລິນ.

## ຜົນຂ້າງຄຽງຈາກຢາ ceftriaxone

- ຜົນຂ້າງຄຽງຈາກຢາ ceftriaxone ແມ່ນມີນ້ອຍ ແຕ່ວ່າ ອາດເກີດຂຶ້ນໄດ້ເຊັ່ນມີເຊື້ອຣາ ທີ່ປາກ ຫຼືຊ່ອງຄອດ (ເປັນຕຸ່ມເຈັບແລະຄັນທີ່ເນື້ອເຍື່ອ), ຖອກທ້ອງ, ຮາກ, ເຈັບຫົວ, ເປັນວິນ, ກິນອາຫານບໍ່ຮູ້ຣົດຊາດ, ຫົວໃຈເຕັ້ນໄວຫຼືບໍ່ສມ່ຳສເມີ. ທ່ານຄວນໄປຫາໝໍ ຖ້າທ່ານມີຄວາມກັງວົນ ກ່ຽວກັບ ອາການໃດໆດັ່ງກ່າວມາ.
- ຜົນຂ້າງຄຽງທີ່ເກີດຂຶ້ນນ້ອຍທີ່ສຸດແມ່ນມີປະຕິກິຣິຍາຂອງອາການແພ້ຢາ - ຖ້າວ່າທ່ານເກີດອາການຕ່າງໆເຊັ່ນໃບໜ້າໃຄ່, ຮູ້ສຶກຄໍຕີບ, ຫັນໃຈຍາກ, ເກີດອາການຄັນຫຼືເປັນຜື່ນຢ່າງຮຸນແຮງ ທ່ານຄວນໄປຫາໝໍທັນທີ (ໂທຣະສັບ 000).

## ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ພແນກສາທາຣະນະສຸກທ້ອງຖິ່ນ ຫຼື ສູນອະນາໄມຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ຣັຖບານປະຈຳຣັດ *NSW Government* ທາງໜ້າຂອງສມຸດ ໂທຣະສັບ (White Pages).

| ເຂດໃນຕົວເມືອງ | ສະຖານທີ່ | ເລກໂທຣະສັບ | ເຂດຊົນນະບົດ | ສະຖານທີ່ | ເລກໂທຣະສັບ |
|---|---|---|---|---|---|
| **Northern Sydney/Central Coast** | Hornsby | 02 9477 9400 | **Greater Southern** | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6080 8900 |
| **South Eastern Sydney/Illawarra** | Randwick | 02 9382 8333 | **Greater Western** | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| **Sydney South West** | Camperdown | 02 9515 9420 | | Bathurst | 02 6339 5601 |
| **Sydney West** | Penrith | 02 4734 2022 | **Hunter/New England** | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| **Justice Health Service** | Matraville | 02 9311 2707 | **North Coast** | Port Macquarie | 02 6588 2750 |
| **NSW Department of Health** | Nth Sydney | 02 9391 9000 | | Lismore | 02 6620 7500 |
| **NSW Health: www.health.nsw.gov.au** | | | | | |

NSW HEALTH

# ຂໍ້ມູນສຳລັບ ຜູ້ພົວພັນໃກ້ຊິດ ກ່ຽວກັບຢາປະຕິຊີວະນະທີ່ໃຊ້ກຳຈັດ ແລະ ຢາສັກປ້ອງກັນ

ຮຽນ

ເມື່ອບໍ່ດົນມານີ້ ທ່ານໄດ້ພົວພັນໃກ້ຊິດກັບຜູ້ທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ.

ໂຣກເຍື່ອຫຸ້ມສມອງອັກເສບແມ່ນເກີດຂຶ້ນຍ້ອນເຊື້ອແບັກທີເຣັຍຊນິດນຶ່ງທີ່ຕິດຢູ່ໃນດັງແລະຮູຄໍ ຂອງຈຳນວນຄົນເຖິງ 10% ຂອງຄົນທົ່ວໆໄປ, ຊຶ່ງຕາມປົກກະຕິແລ້ວກໍຈະບໍ່ເປັນອັນຕຣາຍຫຍັງ. ຢ່າງໃດກໍດີ, ບາງຄັ້ງຄົນທີ່ຖືເຊື້ອກໍອາດແຜ່ຜາຍເຊື້ອໂຣກນີ້ໃຫ້ຄົນອື່ນທີ່ໄດ້ຢູ່ໃກ້ຊິດກັບຕົນ. ມີພຽງຄົນຈຳນວນນ້ອຍ ທີ່ພົວພັນກັບຜູ້ຖືເຊື້ອຈະເປັນໂຣກເຍື່ອຫຸ້ມສມອງອັກເສບ. ເມື່ອໄດ້ຮັບເຊື້ອແບັກທີເຣັຍແລ້ວ ເຊື້ອນີ້ອາດໃຊ້ເວລາເຖິງ 10 ມື້ກ່ອນຈະເກີດເປັນໂຣກໄດ້.

ບໍ່ເປັນການງ່າຍທີ່ເຊື້ອແບັກທີເຣັຍນີ້ຈະແຜ່ຜາຍ ແລະ ມັນຈະແຜ່ຈາກຄົນເຖິງຄົນທີ່ຢູ່ໃກ້ຊິດ, ພົວພັນເປັນເວລາດົນນານ ເທົ່ານັ້ນ. ການພົວພັນກັນໂດຍທາງນ້ຳລາຍ ຈາກສ່ວນໜ້າຂອງປາກ, ແຂ້ວ ຫຼື ຮີມສົບ ບໍ່ຄ່ອຍແຜ່ຜາຍເຊື້ອແບັກທີເຣັຍໃຫ້ແກ່ກັນ.

ມີພຽງແຕ່ຜູ້ທີ່ໄດ້ພົວພັນໃກ້ຊິດກັບ ຜູ້ທີ່ສົງສັຍ ຫຼື ກໍຣະນີທີ່ຖືກຢັ້ງຢືນ ເທົ່ານັ້ນຈຶ່ງຕ້ອງກິນຢາປະຕິຊີວະນະຊນິດພິເສດ ເພື່ອກຳຈັດເຊື້ອແບັກທີເຣັຍຈາກທາງໃນສ່ວນຫຼັງຂອງຮູຄໍ. ຄົນທີ່ພົວພັນໃກ້ຊິດຮວມມີ:

- ຄົນທີ່ຢູ່ເຮືອນດຽວກັນ ຫຼື ຄົນອື່ນໆທີ່ມາພັກຄ້າງຄືນຢູ່ໃນເຮືອນ ພາຍໃນເຈັດມື້ ກ່ອນຜູ້ທີ່ເປັນໂຣກນັ້ນຈະເລີ້ມບໍ່ສະບາຍ, ແລະ
- ຜູ້ທີ່ໃກ້ຊິດສນິດສນົມກັນ ເຊັ່ນຄົນທີ່ເປັນແຟນ/ເປັນຄູ່ຮ່ວມເພດກັນ
- ເດັກທີ່ຮຽນຫ້ອງຮຽນດຽວກັນໃນສູນດູແລເດັກ.

ເນື່ອງຈາກວ່າທ່ານໄດ້ເປັນຜູ້ພົວພັນໃກ້ຊິດກັບຜູ້ເປັນໂຣກນີ້, ທ່ານກໍອາດກາຍເປັນຜູ້ຖືເຊື້ອແບັກທີເຣັຍ ເຍື່ອຫຸ້ມສມອງອັກເສບນີ້ໄດ້. ດ້ວຍເຫດຜົນນີ້ ທ່ານຈຶ່ງຕ້ອງກິນຢາປະຕິຊີວະນະຊຸດນ້ອຍຊຸດນຶ່ງ. ຢາປະຕິຊີວະນະ ນີ້ແມ່ນເພື່ອຈຸດປະສົງໃນການກຳຈັດເຊື້ອໂຣກທີ່ທ່ານອາດຖືຢູ່ ເພື່ອປ້ອງກັນບໍ່ໃຫ້ມີການແຜ່ຜາຍຕື່ມອອກໄປ ອີກ. ຢາປະຕິຊີວະນະນີ້ຈະບໍ່ສາມາດປິ່ນປົວຄົນທີ່ໄດ້ເປັນໂຣກນີ້ຢູ່ແລ້ວ. ໃນລະຫວ່າງທີ່ທ່ານກຳລັງກິນຢາຢູ່ ທ່ານບໍ່ຈຳເປັນຕ້ອງຫຼີກເວັ້ນການພົວພັນກັບຄົນໃນຄອບຄົວຫຼືເດັກນ້ອຍ ແລະ ທ່ານກໍບໍ່ຈຳເປັນຕ້ອງແຍກຕົນເອງຢູ່ ຕ່າງຫາກຫຼືຂາດໂຮງຮຽນ, ຫຼື ຂາດການ.

ຂຶ້ນກັບວ່າເຊື້ອແບັກທີເຣັຍທີ່ກ່ຽວຂ້ອງນັ້ນແມ່ນສາຍພັນໃດ, ຜແນກສາທາຣະນະສຸກອາດແນະນຳ ໃຫ້ຄົນຢູ່ໃນຄອບຄົວດຽວກັນຜູ້ເປັນໂຣກເຍື່ອຫຸ້ມສມອງອັກເສບນັ້ນ ສັກຢາປ້ອງກັນ. ທາງຜແນກ ສາທາຣະນະສຸກຈະເປັນຜູ້ບອກທ່ານກ່ຽວກັບເຣື່ອງນີ້ ຖ້າວ່າຈຳເປັນຕ້ອງໄດ້ສັກຢາ.

ເປັນສິ່ງສຳຄັນທີ່ທ່ານຕ້ອງໄດ້ໄປຂໍຄຳແນະນຳຈາກແພດທັນທີ ຖ້າວ່າທ່ານເກີດມີອາການໃດໆ ຂອງໂຣກເຍື່ອຫຸ້ມສມອງອັກເສບ (ຊຶ່ງຊຽນຣາຍລະອຽດໄວ້ຂ້າງລຸ່ມນີ້) ຫຼືວ່າຖ້າທ່ານຮູ້ສຶກບໍ່ສະບາຍ. **ກະຣຸນາ ຖືເອົາຈົດໝາຍສະບັບນີ້ ໄປນຳ ຖ້າວ່າທ່ານຕ້ອງໄປຫາໝໍ ຫຼື ໄປທີ່ຜແນກສຸກເສີນຂອງໂຮງພຍາບານ.**

ໃຫ້ເວົ້າກັບຜູ້ທີ່ທ່ານໄດ້ໃຊ້ເວລາຫຼາຍໃນການຢູ່ຮ່ວມກັບເຂົາເຈົ້າ (ເຊັ່ນຄອບຄົວແລະໝູ່ເພື່ອນໃກ້ຊິດ) ກ່ຽວກັບໂຣກເຍື່ອຫຸ້ມສມອງອັກເສບນີ້ ເພື່ອວ່າເຂົາເຈົ້າຈະໄດ້ຮູ້ວ່າຕ້ອງໄດ້ໄປຫາໝໍຖ້າຫາກມີອາການຂຶ້ນ. ຄົນອື່ນໆທີ່ທ່ານຫາກໍໄດ້ເລີ້ມພົວພັນນັ້ນບໍ່ຈຳເປັນຕ້ອງກິນຢາປະຕິຊີວະນະ.

ອາການຂອງໂຣກເຍື່ອຫຸ້ມສມອງອັກເສບທີ່ທ່ານຕ້ອງໄດ້ສັງເກດເບິ່ງຮວມອາການຕ່າງໆໄວ້ດັ່ງນີ້:

- ເກີດເປັນໄຂ້ທັນທີທັນໃດ
- ເຈັບປວດຕາມຂໍ້ແລະກ້າມເນື້ອ
- ປຸ້ນທ້ອງແລະຮາກ
- ເຈັບຫົວ
- ປວດຕົ້ນຄໍ
- ບໍ່ມັກແສງຈ້າ
- ເມື່ອຍອ່ອນເພັຍ
- ຜື່ນເປັນຈຸດໆອາດປາກົດຂຶ້ນທົ່ວໆໄປຕາມຜິວໜັງແລະອາດປ່ຽນແປງເປັນຜື່ນໃຫຍ່ໆສີແດງຊ້ຳໂດຍໄວ. ຕາມປົກກະຕິ ຜື່ນນີ້ຈະບໍ່ຫາຍໄປເມື່ອໃຊ້ມືຂົ່ມຄ່ອຍໆ. ບາງຄັ້ງ ຜື່ນຈະບໍ່ປາກົດເລີຍ.
- ອາການແຕ່ຕົ້ນໆອາດຮວມມີ ປວດຂາ, ມືຕີນເຢັນແລະສີຜິວຜິດປົກກະຕິ.

**ເດັກອາຍຸນ້ອຍ** ອາດຈະມີອາການທົ່ວໆໄປຊຶ່ງຮວມມີ ອາການຫົນຫວຍ, ເມົາ ຫຼື ປຸກຍາກ, ໄຫ້ສຽງແຫຼມ ຫຼື ແອ່ວ, ຜິວໜັງສີຊີດແລະ ມີຕຸ່ມເປັນຈຸດ, ແລະ ບໍ່ຍອມກິນເຂົ້າ.

ເຖິງແມ່ນວ່າທ່ານຈະໄດ້ສັກຢາກັນໂຣກເຍື່ອຫຸ້ມສມອງອັກເສບແລ້ວກໍຕາມ ທ່ານກໍຍັງຕ້ອງສັງເກດເບິ່ງອາການຂອງໂຣກນີ້ ເພາະວ່າການສັກຢາບໍ່ສາມາດປ້ອງກັນທຸກສາຍພັນຂອງໂຣກເຍື່ອຫຸ້ມສມອງອັກເສບໄດ້.

ທ່ານສາມາດເຂົ້າໄປເບິ່ງເຈ້ຍຂໍ້ມູນທີ່ມີຣາຍລະອຽດຄົບຖ້ວນກວ່າ ກ່ຽວກັບໂຣກເຍື່ອຫຸ້ມສມອງອັກເສບໄດ້ທີ່: www.health.nsw.gov.au/factsheets/infectious/meningococcal.html

ກະຣຸນາຕິດຕໍ່ຫາຜແນກສາທາຣະນະສຸກ ຖ້າວ່າທ່ານມີຄຳຖາມໃດໆ. *ຖ້າທ່ານບໍ່ສະບາຍ, ຢ່າໂທຣະສັບຫາຜແນກສາທາຣະນະສຸກ - ໃຫ້ຮີບໄປຫາໝໍທັນທີ.*

ດ້ວຍຄວາມນັບຖື,

ຜູ້ອຳນວຍການ
ຜແນກສາທາຣະນະສຸກ

*ຮຽນທ່ານໝໍທີ່ນັບຖື*

*ບຸກຄົນຜູ້ນີ້ຖືວ່າໄດ້ເປັນຜູ້ໃກ້ຊິດກັບຜູ້ທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ. ຖ້າຫາກວ່າລາວເກີດບໍ່ສະບາຍ ກໍຂໍໃຫ້ທ່ານໝໍຈົ່ງພິຈາຣະນາເອົາໂຣກເຍື່ອຫຸ້ມສມອງເຂົ້າໄປເປັນປະເດັນໃນການວິນິດສັຍໂຣກດ້ວຍ ແລະ ກະຣຸນາລາຍງານໃຫ້ຜແນກສາທາຣະນະສຸກຊາບໂດຍດ່ວນທາງໂທຣະສັບດ້ວຍ ຖ້າຫາກວ່າທ່ານໝໍສົງສັຍວ່າ ນີ້ ແມ່ນກໍຣະນີຂອງໂຣກເຍື່ອຫຸ້ມສມອງອັກເສບ.*

## ຣາຍລະອຽດເພີ້ມເຕີມ - ຜແນກສາທາຣະນະສຸກແຫ່ງຣັດ NSW

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ຜແນກສາທາຣະນະສຸກທ້ອງຖິ່ນ ຫຼື ສູນອະນາໄມຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ຣັຖບານປະຈຳຣັດ *NSW Government* ທາງໜ້າຂອງສມຸດ ໂທຣະສັບ (White Pages).

| ເຂດໃນຕົວເມືອງ | ສະຖານທີ່ | ເລກໂທຣະສັບ | ເຂດຊົນນະບົດ | ສະຖານທີ່ | ເລກໂທຣະສັບ |
|---|---|---|---|---|---|
| **Northern Sydney/Central Coast** | Hornsby | 02 9477 9400 | **Greater Southern** | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6080 8900 |
| **South Eastern Sydney/Illawarra** | Randwick | 02 9382 8333 | **Greater Western** | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| **Sydney South West** | Camperdown | 02 9515 9420 | | Bathurst | 02 6339 5601 |
| **Sydney West** | Penrith | 02 4734 2022 | **Hunter/New England** | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| **Justice Health Service** | Matraville | 02 9311 2707 | **North Coast** | Port Macquarie | 02 6588 2750 |
| **NSW Department of Health** | Nth Sydney | 02 9391 9000 | | Lismore | 02 6620 7500 |
| **NSW Health: www.health.nsw.gov.au** | | | | | |

# ຂໍ້ມູນສຳລັບ ຜູ້ພົວພັນທີ່ບໍ່ໃກ້ຊິດ (ບໍ່ຕ້ອງໃຊ້ຢາຢາປະຕິຊີວະນະ)

ຮຽນ

ເມື່ອບໍ່ດົນມານີ້ ທ່ານໄດ້ພົວພັນໃກ້ຊິດກັບຜູ້ທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ.

ໂຣກເຍື່ອຫຸ້ມສມອງອັກເສບແມ່ນເກີດຂຶ້ນຍ້ອນເຊື້ອແບັກທີເຣັຍຊນິດນຶ່ງທີ່ຕິດຢູ່ໃນດັງແລະຮູຄໍ ຂອງຈຳນວນຄົນເຖິງ 10% ຂອງຄົນທົ່ວໆໄປ, ຊຶ່ງຕາມປົກກະຕິແລ້ວກໍຈະບໍ່ເປັນອັນຕຣາຍຫຍັງ. ຢ່າງໃດກໍດີ, ບາງຄັ້ງຄົນທີ່ຖືເຊື້ອກໍອາດແຜ່ຜາຍເຊື້ອໂຣກນີ້ໃຫ້ຄົນອື່ນທີ່ໄດ້ຢູ່ໃກ້ຊິດກັບຕົນ. ມີພຽງຄົນຈຳນວນນ້ອຍ ທີ່ພົວພັນກັບຜູ້ຖືເຊື້ອຈະເປັນໂຣກເຍື່ອຫຸ້ມສມອງອັກເສບ. ເມື່ອໄດ້ຮັບເຊື້ອແບັກທີເຣັຍແລ້ວ ເຊື້ອນີ້ອາດໃຊ້ເວລາເຖິງ 10 ມື້ກ່ອນຈະເກີດເປັນໂຣກໄດ້.

ບໍ່ເປັນການງ່າຍທີ່ເຊື້ອແບັກທີເຣັຍນີ້ຈະແຜ່ຜາຍ ແລະ ມັນຈະແຜ່ຈາກຄົນເຖິງຄົນທີ່ຢູ່ໃກ້ຊິດ, ພົວພັນເປັນເວລາດົນນານ ເທົ່ານັ້ນ. ການພົວພັນກັນໂດຍທາງນ້ຳລາຍ ຈາກສ່ວນໜ້າຂອງປາກ, ແຂ້ວ ຫຼື ຮິມສົບ ບໍ່ຄ່ອຍແຜ່ຜາຍເຊື້ອແບັກທີເຣັຍໃຫ້ແກ່ກັນ.

ມີພຽງແຕ່ຜູ້ທີ່ໄດ້ພົວພັນ**ໃກ້**ຊິດກັບ ຜູ້ທີ່ສົງສັຍ ຫຼື ກໍຣະນີທີ່ຖືກຢັ້ງຢືນ ເທົ່ານັ້ນຈຶ່ງຕ້ອງກິນຢາປະຕິຊີວະນະຊນິດພິເສດ ເພື່ອກຳຈັດເຊື້ອແບັກທີເຣັຍຈາກທາງໃນສ່ວນຫຼັງຂອງຮູຄໍ. ຄົນທີ່ພົວພັນໃກ້ຊິດຮວມມີ: ຄົນທີ່ຢູ່ເຮືອນດຽວກັນ ຫຼື ຄົນອື່ນໆທີ່ມາພັກຄ້າງຄືນຢູ່ໃນເຮືອນ ພາຍໃນເຈັດມື້ ກ່ອນຜູ້ທີ່ເປັນໂຣກ ນັ້ນຈະເລີ້ມບໍ່ສະບາຍ, ແລະ ຜູ້ທີ່ໃກ້ຊິດສນິດສນົມກັນ ເຊັ່ນຄົນທີ່ເປັນແຟນ/ເປັນຄູ່ຮ່ວມເພດກັນ ເດັກທີ່ຮຽນຫ້ອງຮຽນດຽວກັນໃນສູນດູແລເດັກ.

ເນື່ອງຈາກວ່າທ່ານບໍ່ໄດ້ໃກ້ຊິດກັບກໍຣະນີຂອງຄົນທີ່ເປັນໂຣກນີ້, ທ່ານຈຶ່ງບໍ່ຈຳເປັນຕ້ອງກິນຢາປະຕິຊີວະນະ, ຫຼືຫຼີກເວັ້ນການພົວພັນກັບຄົນໃນຄອບຄົວຫຼືເດັກນ້ອຍ, ແລະທ່ານກໍບໍ່ຈຳເປັນຕ້ອງແຍກ ຕົນເອງຢູ່ ຕ່າງຫາກ ຫຼືຂາດໂຮງຮຽນ, ຫຼື ຂາດການ.

ເຖິງແມ່ນວ່າການສ່ຽງຕໍ່ການເປັນພະຍາດຂອງທ່ານມີເປີເຊັນຕ່ຳຫຼາຍ, ແຕ່ວ່າເປັນສິ່ງສຳຄັນທີ່ທ່ານຕ້ອງໄປຫາໝໍທັນທີ ຖ້າວ່າທ່ານເກີດມີອາການໃດໆຂອງໂຣກເຍື່ອ ຫຸ້ມສມອງອັກເສບ (ຊຶ່ງຂຽນຣາຍລະອຽດໄວ້ຂ້າງລຸ່ມນີ້) ຫຼືວ່າຖ້າທ່ານຮູ້ສຶກບໍ່ສະບາຍ. **ກະຣຸນາ ຖືເອົາຈົດໝາຍ ສະບັບນີ້ ໄປນຳ ຖ້າວ່າທ່ານຕ້ອງໄປຫາໝໍ ຫຼື ໄປທີ່ພະແນກສຸກເສີນຂອງໂຮງພຍາບານ.**

ໃຫ້ເວົ້າກັບຜູ້ທີ່ທ່ານໄດ້ໃຊ້ເວລາຫຼາຍໃນການຢູ່ຮ່ວມກັບເຂົາເຈົ້າ (ເຊັ່ນຄອບຄົວແລະໝູ່ເພື່ອນໃກ້ຊິດ) ກ່ຽວກັບໂຣກເຍື່ອຫຸ້ມສມອງອັກເສບນີ້ ເພື່ອວ່າເຂົາເຈົ້າຈະໄດ້ຮູ້ວ່າຕ້ອງໄດ້ໄປຫາໝໍຖ້າຫາກມີອາການຂຶ້ນ. ຄົນອື່ນໆທີ່ທ່ານຫາກໍໄດ້ເລີ້ມພົວພັນນັ້ນບໍ່ຈຳເປັນຕ້ອງກິນຢາປະຕິຊີວະນະ.

ອາການຂອງໂຣກເຍື່ອຫຸ້ມສມອງອັກເສບທີ່ທ່ານຕ້ອງໄດ້ສັງເກດເບິ່ງຮວມອາການຕ່າງໆໄວ້ດັ່ງນີ້:

- ເກີດເປັນໄຂ້ທັນທີທັນໃດ
- ເຈັບປວດຕາມຂໍ້ແລະກ້າມເນື້ອ
- ປຸ້ນທ້ອງແລະຮາກ
- ເຈັບຫົວ
- ປວດຕົ້ນຄໍ
- ບໍ່ມັກແສງຈ້າ
- ເມື່ອຍອ່ອນເພັຍ
- ຜື່ນເປັນຈຸດໆອາດປາກົດຂຶ້ນທົ່ວໆໄປຕາມຜິວໜັງແລະອາດປ່ຽນແປງເປັນຜື່ນໃຫຍ່ໆສີແດງຊ້ຳໂດຍໄວ. ຕາມປົກກະຕິ ຜື່ນນີ້ຈະບໍ່ຫາຍໄປເມື່ອໃຊ້ມືຂົ່ມຄ່ອຍໆ. ບາງຄັ້ງ ຜື່ນຈະບໍ່ປາກົດເລີຍ.
- ອາການແຕ່ຕົ້ນໆອາດຮວມມີ ປວດຂາ, ມືຕີນເຢັນແລະສີຜິວຜິດປົກກະຕິ.

**ເດັກອາຍຸນ້ອຍ** ອາດຈະມີອາການທົ່ວໆໄປຊຶ່ງຮວມມີ ອາການທີນທວຍ, ເມີາ ຫຼື ປຸກຍາກ, ໄຫ້ສຽງແຫຼມ ຫຼື ແອ່ວ, ຜິວໜັງສີຊີດແລະ ມີຕຸ່ມເປັນຈຸດ, ແລະ ບໍ່ຍອມກິນເຂົ້າ.

ເຖິງແມ່ນວ່າທ່ານຈະໄດ້ສັກຢາກັນໂຣກເຍື່ອຫຸ້ມສມອງອັກເສບແລ້ວກໍຕາມ ທ່ານກໍຍັງຕ້ອງສັງເກດເບິ່ງ ອາການຂອງໂຣກນີ້ ເພາະວ່າການສັກຢາບໍ່ສາມາດປ້ອງກັນທຸກສາຍພັນຂອງໂຣກເຍື່ອຫຸ້ມສມອງອັກເສບໄດ້.

ທ່ານສາມາດເຂົ້າໄປເບິ່ງເຈັ້ຍຂໍ້ມູນທີ່ມີຣາຍລະອຽດຄົບຖ້ວນກວ່າ ກ່ຽວກັບໂຣກເຍື່ອຫຸ້ມສມອງອັກເສບໄດ້ທີ່:
www.health.nsw.gov.au/factsheets/infectious/meningococcal.html

ກະຣຸນາຕິດຕໍ່ຫາຜແນກສາທາຣະນະສຸກ ຖ້າວ່າທ່ານມີຄຳຖາມໃດໆ. ຖ້າທ່ານບໍ່ສະບາຍ, ຢ່າໂທຣະສັບຫາ ຜແນກສາທາຣະນະສຸກ - ໃຫ້ຮີບໄປຫາໝໍທັນທີ.

ດ້ວຍຄວາມນັບຖື,

ຜູ້ອຳນວຍການ
ຜແນກສາທາຣະນະສຸກ

*ຮຽນທ່ານໝໍທີ່ນັບຖື*

*ບຸກຄົນຜູ້ນີ້ຖືວ່າໄດ້ເປັນຜູ້ໃກ້ຊິດກັບຜູ້ທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ. ຖ້າຫາກວ່າລາວເກີດບໍ່ສະບາຍ ກໍຂໍໃຫ້ທ່ານໝໍຈົ່ງພິຈາຣະນາເອົາໂຣກເຍື່ອຫຸ້ມສມອງເຂົ້າໄປເປັນປະເດັນໃນການວິນິດສັຍໂຣກດ້ວຍ ແລະ ກະຣຸນາລາຍງານໃຫ້ຜແນກສາທາຣະນະສຸກຊາບໂດຍດ່ວນທາງໂທຣະສັບດ້ວຍ ຖ້າຫາກວ່າທ່ານໝໍສົງສັຍວ່າ ນີ້ ແມ່ນກໍຣະນີຂອງໂຣກເຍື່ອຫຸ້ມສມອງອັກເສບ.*

## ຣາຍລະອຽດເພີ້ມເຕີມ - ພະແນກສາທາຣະນະສຸກແຫ່ງຣັດ NSW

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ພະແນກສາທາຣະນະສຸກທ້ອງຖິ່ນ ຫຼື ສູນອະນາໄມຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ຣັຖບານປະຈຳຣັດ *NSW Government* ທາງໜ້າຂອງສມຸດ ໂທຣະສັບ (White Pages).

| ເຂດໃນຕົວເມືອງ | ສະຖານທີ່ | ເລກໂທຣະສັບ | ເຂດຊົນນະບົດ | ສະຖານທີ່ | ເລກໂທຣະສັບ |
|---|---|---|---|---|---|
| **Northern Sydney/Central Coast** | Hornsby | 02 9477 9400 | **Greater Southern** | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6080 8900 |
| **South Eastern Sydney/Illawarra** | Randwick | 02 9382 8333 | **Greater Western** | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| **Sydney South West** | Camperdown | 02 9515 9420 | | Bathurst | 02 6339 5601 |
| **Sydney West** | Penrith | 02 4734 2022 | **Hunter/New England** | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| **Justice Health Service** | Matraville | 02 9311 2707 | **North Coast** | Port Macquarie | 02 6588 2750 |
| **NSW Department of Health** | Nth Sydney | 02 9391 9000 | | Lismore | 02 6620 7500 |
| **NSW Health: www.health.nsw.gov.au** | | | | | |